**Lao People's Democratic Republic**
**Peace Independence Democracy Unity Prosperity**

Prime Minister

No.: **13**/PM
Vientiane Capital, dated: 29 August 2023

# Order

## on Increased Efforts to Resolve the Critical Economic-Financial Issues and Issues Concerning Inflation, Currency Exchange Rates, the Price of Goods, and Foreign Debt

**To:** Ministers, Directors of Party-State Organisations, and Presidents of the Lao Front for National Construction, the Lao Veterans Federation, and Mass Organisations at Central Level;

- Pursuant to Law 03/NA, dated 16 November 2021, on the Government (amended);
- Pursuant to Resolutions 19/PB, dated 30 June 2023, on the Appointment of a Taskforce Responsible for Resolving Critical Economic-Financial Issues, Inflation, Currency Exchange Rates, the Price of Goods, and Foreign Debt;
- Pursuant to Notice 48/OPCC, dated 13 July 2023, of the Office of the Party Central Committee; and
- Pursuant to the guidance of the Taskforce meeting detailed in Resolutions 19/PB, dated 21 July 2023;

For the adoption of Resolutions 19/PB, dated 30 June 2023, on Increased Efforts to Resolve the Critical Economic-Financial Issues, Inflation, Currency Exchange Rates, the Price of Goods, and Foreign Debt, the guidance of the Politburo and Secretariat of the Party Central Committee in Notice 48/OPCC, dated 13 July 2023, and resolutions of the National Assembly of the 5$^{th}$ Ordinary Meeting of the 9$^{th}$ Legislature of the NA must be appropriate to true circumstances, efficient, and effective while also acting as a basic reference for the sectors and organisations concerned at central level in addition to local authorities to implement the measures to be taken to resolve the issues of inflation, exchange rates, the price of goods, and foreign debt smoothly and for positive results to be achieved.

**The Prime Minister [hereby] issues the [following] order:**

**I. Ministries, ministry-equivalent organisations, the Lao Front for National Construction ("LFNC"), the Lao Veterans Federation ("LVF"), mass organisations at central level, local authorities, and economic sectors are to take on increased proactive responsibility over the performance of their duties in association with resolving the issues of inflation, exchange rates, the price of goods, and foreign debt by focusing on a number of general and key tasks:**

1. Increase education and training in political concepts amongst employees, the military, the police, natural and juridical persons, entrepreneurs, and the multiethnic people to overcome economic-financial difficulties through the continued implementation and integration of the resolutions of the 11th Party Congress and the 9th Five-Year National Socio-Economic Development Plan (2021-2025), and the continued implementation of the two National Agendas to be stronger and yield improved results in real terms by focusing on mobilisation throughout society to take part in the process to resolve these critical economic-financial issues and to consider such to be a primary battlefield requiring collective labour and minds in the implementation [thereof] to achieve clear realisation and transformation. In addition, drive forward rural development, poverty alleviation, and effective improvements to the quality of life of the people, alert the people to contribute to and take part in properly resolving the issue of social ills at grassroots levels by – for example – offering their cooperation, facilitating matters, providing data, and consulting with the taskforce ("**Taskforce**") pursuant to Resolutions 19/PB concerning the successful, efficient, and truly effective resolution of economic-financial issues and difficulties and issues and difficulties pertaining to inflation, exchange rates, the price of goods, and foreign debt.

2. Eliminate and resolve the issue of social ills relating to economic-financial difficulties and the issues of inflation, exchange rates, the price of goods, and foreign debt and tackle the difficulties and hardship plaguing [people's] lives, production, business, and services, which affect political stability, socio-economic development, the environment, order, and peace and security in society.

3. Pay active attention to the implementation of policies for frugality and combat wasteful spending by reducing unessential expenditures of the state ("**State**") sector and of households to prevent increased inflation.

   1) Implement Decree 205/Gov., dated 22 July 2023, on Implementation and Countering Wasteful Spending strictly and decisively.

   2) Implement Decree 599/Gov., dated 29 September 2021, on State Vehicles strictly for results to be yielded in real terms and to promote the use of electric vehicles pursuant to Resolutions 08/Gov., dated 4 October 2021, of the government ("**Government**") to reduce the importation of fuel and the outflow

of foreign currency and to promote the use of electrical energy for which the Lao People's Democratic Republic ("**Lao PDR**") has potential.

**II. Pursuant to Resolutions 19/PB, the members of the Taskforce are assigned autonomous responsibility to coordinate with the sectors concerned at central level, local authorities, and [other] entities in focusing on the study and application of the following measures:**

**1. Measures to resolve inflation:**

**1.1 The Bank of the Lao PDR ("BOL") is assigned the following:**

1) To manage the M2 money supply to keep it within controllable limits and to manage, monitor and limit increases to the rate of inflation and reduce it while also controlling the price of goods which affect inflation in the Lao PDR and the lives and wellbeing of the people;

2) To manage closely the financial operations of commercial banks and ensure that they do not exacerbate [the situation] or exchange currencies illegally while also applying penalties decisively to wrongdoers and for illegal actions and to persons abusing their duties for illegitimate or illegal gains without exception; and

3) To manage, monitor, inspect, and resolve [the issue of] improper currency exchange and prosecute natural and juridical persons engaging in the unlawful exchange of currencies and exacerbating [the situation] in addition to target groups using their personal accounts to exchange currencies illegally and if encountering employees or officials abusing their duties to facilitate [such acts], they must strictly undergo the legal process.

**1.2 The Ministry of Finance ("MoF") is assigned the following:**

1) To eliminate the smuggling and importation of illegal vehicles and goods across borders and goods which have been approved by the Government as luxury goods and domestically producible goods with all importations of goods having to pass through checkpoints which meet the infrastructural criteria in full (scanning systems, ບ 53 document tracking system, and modern systems to manage the importation and exportation of goods, such as the NSWA+); and to resolve situations [whereby importation takes place] outside the [proper] system, ensuring that persons holding importation rights have to pay the value of their customs declaration (importers should not be allowed to create their own price declaration – it must be the factory or vender of the goods at their point of departure who issues it for them) and

[whereby] the payment of customs duties are evaded (goods ordered from foreign countries must be managed through the checkpoint or warehouse system of the delivery company so as to ensure that customs duties are paid correctly and in full);

2) To continue the monitoring, approval, and promulgation of the Presidential Decree on Goods Lists and Outward Customs Rates, the Presidential Decree on the Price of Natural Resources, and the Presidential Decree on the Lease and Concession of State Assets; and

3) To collect revenues from currently existing income bases in full using modern tools as a centralised system, especially revenues from tax obligations; to look into adjusting the rate of value added tax ("**VAT**") from 7% to 10%, excise tax ("**ET**"), profit tax, and income tax from the providers of goods and services in foreign investment projects (energy and mining sector) while also looking into the creation of incentives for more business units to become VAT-registered; to improve import-export management mechanisms for the various types of goods in order to control the processing of transactions and business; and to look into adjusting ET on the importation of luxury goods and goods which have a negative impact on health and society in such a way that can be implemented fast while also implementing measures to suppress all forms of smuggling and illegal importation.

**1.3 The Ministry of Industry and Commerce ("MIC") is assigned the following:**

1) To control and intervene into the price of goods which have a rapid impact on inflation and the lives and wellbeing of the people; and

2) To specify a list of luxury goods to reduce and limit imports while also looking into and applying measures to manage the appropriate importation of goods so as to limit and reduce the importation of domestically producible goods and luxury goods without conflicting with international regulations to which the Lao PDR is party, such as measures not involving customs duties or having an impact on domestic industry and production.

**2. Measures to resolve exchange rates**

**1) BOL is assigned the following:**

- To manage, monitor, and limit fluctuations in exchange rates and transform currency exchange rates systematically at a controllable level;

- To implement monetary and exchange rate policies consistently with true [circumstances] and specify exchange rates on a daily basis to bring about flexibility; and

- To adapt foreign currencies for goods which are essential for production and life;

**2.2 Measures for foreign currency management in the Lao PDR**

1) **BOL is assigned the following:**

   To implement Order 10/PM, dated 14 July 2023, on Foreign Currency Management strictly and decisively;

2) **The Ministry of Public Security is assigned the following:**

   - To manage, monitor, inspect, and resolve improper currency exchange; and to increase its responsibility over operations, inspections, and prosecutions against natural and juridical persons engaging in the unlawful exchange of currencies and exacerbating [the situation] strictly and decisively;

   - To monitor target groups using personal accounts to exchange currencies illegally while also monitoring and if encountering employees or officials abusing their duties to facilitate illegal currency exchange, they must strictly undergo the legal process; and

   - To monitor the taking of cash into and out of the Lao PDR to ensure that it conforms to the law and regulations while also applying decisive penalties to violators in accordance with their mandate and exchange data with BOL on a regular basis;

3) **The MIC is assigned the following:**

   - To monitor the importation and supply of fuel by companies to act as data for considering adjustments to foreign currencies to ensure that the importation and supply of fuel is sufficient; and

   - To manage import-export companies through registration and all regularly moved goods being dealt with fast by making such companies open deposit accounts at banks which have offices in the Lao PDR, receive [and force] payments for purchases and sales, services, and

imports and exports and the performance of obligations to take place via the banking system while also creating data linking mechanisms and developing data systems which link up to the sectors concerned as a matter of urgency;

**2.3 Measures for the management of foreign currency from investments**

1) **The Ministry of Planning and Investment ("MPI") is assigned the following:**

   - To raise and attract a large amount of foreign direct investment ("**FDI**");

   - To facilitate and follow the stages for the streamlined requesting of project approval and review all investment structures; and

   - To improve mechanisms for the monitoring of the importation of capital (FDI), foreign loans, and official development assistance into the banking system; and to create mechanisms for the linking up of data and the monitoring and verification of capital with investors using electronic systems;

2) **The MoF is assigned the following:**

   - To support and promote the use of local currency, especially for the domestic payment of goods and services to take place in kip; to inspect illegal foreign currency transactions strictly; and to manage revenues into the State Budget in foreign currencies and activity via the MoF to be centralised with BOL;

   - To monitor and inspect the importation of registered capital, other capital, and income from domestic and foreign private investment projects in foreign currencies to be consistent with contracts and foreign currency management law; and

   - For units managing the issuance of licensing for the importation and exportation of goods to specify the condition for enterprises to have to present import-export payment documentation for goods via a bank in the Lao PDR, such being one of the conditions contingent for license issuance;

**2.4 Measures for the Mobilisation of Foreign Currency Capital Sources**

1) **The MPI is assigned the following:**

- To expedite the inspection and reassessment of domestic and foreign private investment projects, especially trial/pilot mineral investment project and regular mineral projects and if a project fails to make progress, a warning notice must be given in accordance with the process to move towards dissolution or a termination notice for the memorandum of understanding or contract and the project revoked while also demanding the performance of obligations [for taxes] yet unpaid by the company and inspecting the capital importation in practice and the performance of obligations pursuant to the contract while avoiding project reservations, such as companies being granted multiple project concession agreements;

- To expedite amendments to the Law on Investment Promotion to bring it into line with the socio-economic climate of the country in the modern era; to look into and amend essential subordinate legislation as a matter of urgency, such as the Decree on Casino Management, which is to be completed fast; to amend the coordination mechanisms and linkages for investment approval, in so doing enhancing rights and responsibilities for localities; to continue the implementation of Orders 02/PM and 03/PM, amend Decision 003/CIPM, dated 6 June 2022, on the Demarcation of Responsibilities for Local Levels in Considering the Approval of Land Survey Studies to Invest in Agroforestry Production and Service Concessions; to amend the list of concession activities and controlled businesses and prepare and open the trial/testing/piloting of the use of investment request documentation monitoring programmes while also paying close attention to looking into promotional policies for the operation of businesses and investment for large-scale investment projects and strategic projects and specifying measures to support the importation of capital for the development of projects in Special Economic Zones ("**SEZs**"), industrial parks, and other projects which are not SEZs in order to support the viability of implementation in accordance with set plans;

- To expedite negotiations for increased contractual [tax] obligation rates for business activities, 100% share sales, and dividends of the Golden Triangle Zone Casino, the 30% State shareholdings in Zone B of the Savan-Seno SEZ and Champasak SEZ, the 25% State shareholding in Saysettha Development Zone, and the 30% shareholding in the Pakse-Japan SEZ and to successfully resolve the issue of vehicles being imported in breach of legal regulations in the Golden Triangle SEZ as a matter of urgency;

2) **The MIC and Ministry of Public Works and Transport are assigned the following:**

To expedite the implementation of measures to facilitate trade and transport to convenience and streamline the importation and exportation of goods and reduce expenses for the business sector; to improve centralised, convenient and streamlined transportation service links between land, dry ports, and rail at reasonable service charges; and to monitor and support improvements to outstanding issues as advised by the International Civil Aviation Organization in connection with service improvements and overflight management;

3) **The MoF is assigned the following:**

To support the collection of revenues, especially at customs borders, support and promote border trade further, and improve border checkpoint management to ensure uniformity, modernity, transparency, convenience, speed, and the omission of unnecessary processes while also paying close attention to improving basic infrastructure and service quality to cater to tourism, reducing processes which create obstacles to promoting the potential for border trade in accordance with agreement frameworks by specifying management measures which are well suited to the unique characteristics of each locality;

4) **The Ministry of Foreign Affairs is assigned the following:**

As a matter of urgency, to look into visa policies for tourists wishing to enter and exit multiple times per year and the provision of unilateral visas for countries wishing to attract tourists in addition to policies concerning structures by specifying them as zones and collecting agricultural land fees; and to develop monitoring mechanisms to manage foreign currency revenues from tourists and foreign currency revenues from the sending of money back to the country by Lao workers working overseas;

5) **The MIC and Ministry of Agriculture and Forestry are assigned the following:**

To expedite negotiations concerning plant and animal hygiene to gain access to markets for which our country has potential, such as coffee, rubber, mangos, jackfruit, sugarcane, peanuts, frozen beef, and iridescent sharks while also broadly disseminating specifications for plant and animal

hygiene for producers and entrepreneurs to be able to export more agricultural goods;

**2.5 Measures for frugality over foreign currencies**

1) **The MoF is assigned the following:**

- To procure and hire the necessary vehicles, accessories, office equipment, materials, and uniforms for State organization offices based on frugality and prioritise domestically produced products;

- For official work overseas funded by the State Budget, to study in detail by selecting exclusively the topic of the meeting, seminar, or training relevant and essential while also limiting the number of target attendees; and

- When receiving domestic and foreign guests funded by the State Budget, to have a frugal mindset and refrain from expensive foreign beverages, instead using Lao domestic products while prohibiting the purchase of gifts which are foreign products for domestic and foreign guests.

3. **Measures for the management of goods prices**

**3.1 The MIC is assigned the following:**

1) As a matter of urgency, to study and specify goods pricing structures necessary for life, putting together factors in exchange rates which show the investment capital for production and importation by delving deeply into the collection of data and analyse and research the investment capital for the production and pricing structures of rice, pork, fish, eggs, and so forth while also focusing hard on striking a balance between that which can be produced and supplied by each self-sustaining locality which sells goods;

2) As a matter of urgency, to study and implement management measures for the importation of goods by creating a list of goods which can be produced domestically, including non-essential goods, to adjust importation without conflicting with international regulations to which the Lao PDR is party, such as tariff-free measures and measures which do not have an impact on domestic industry and production;

3) As a matter of urgency, to produce goods and reduce the exportation of raw materials and expand the processing of minerals and agricultural goods so as to create added value prior to exportation;

4) As a matter of urgency, to manage, promote, and develop agricultural processing factories to produce production factors to supply the domestic market, such as animal feed factories to be able to provide 70% of animal feed and fertiliser factories to be able to provide 50% of domestic demand, and to implement management measures for importation hand-in-hand with promoting domestic production to reduce investment capital for production for centres and farms; and to produce rice seeds, pigs, chickens (egg laying breeds and meat breeds), fish, and a number of prioritised crops to be able to compete with imported goods and provide seeds for domestic use at a basic level (60-70%);

**3.2 BOL is assigned the following:**

To study and review its principles for the provision of credit to support and promote production for domestic consumption, replace imports, and produce for export; and to expedite the implementation of Decision 93/PM, dated 14 July 2023, on the Implementation of Credit Policy to Stimulate the Economy and the Credit Policy to Distribute Investment Capital to Localities in the Correct Places and More Effectively, in which urgent attention must be paid to the specification of lists of business units engaged in the production of goods for domestic distribution and exportation which show promise as concerns good production with a market to receive them and business units performing their duties as concerns price interventions according to the agreed lists.

**4. Measures for resolving foreign debt**

**4.1 BOL is assigned the following:**

1) To mobilise capital using financial instruments and products in multiple formats in accordance with circumstances and as appropriate to the economy of the Lao PDR (entities responsible for foreign debt management must ensure that the management and administration of foreign debts is stable during each period);

2) To expedite the collection of debts used to release loans to State owned enterprises and to repay of foreign debts within the time specified; and

3) To exchange data and experience concerning sources for capital to be raise (inward) and true monthly, quarterly, and annual payment plans to

determine the inflow and outflow of money and enable the timely management of sufficient capital.

**4.2 The MoF is assigned the following:**

1) To raise capital from assets in the form of electrical energy projects, mining projects, and so forth;

2) As a matter of urgency, to implement processes for the raising of capital and complete the EDL-T money transfers; and

3) To support business units engaging in the exportation of goods or services receiving income in foreign currencies to remit their [tax] obligations in foreign currencies for the repayment of foreign debt.

**4.3 The MPI is assigned the following:**

To organise the bidding for mining project concession rights in areas in which multiple companies are interested with the main condition being the remittance of money to the Government as aid and the using of money given to the Government as long-term, low-interest loans in accordance with previously specified conditions and to bring an end to proposal and approval mechanisms which forgo inspecting and selecting investors so as to ensure professional companies with [the right] specialisations, real funding, and experience rather than broker companies and to avoid the reservation of multiple projects which end up not being developed with debts left outstanding to banks or [tax] obligations left outstanding to the Government.

## III. Implementation Measures

1) Ministries, ministry-equivalent organisations, the LFNC, the LVF, mass organisations at central level, and local authorities nationwide must issue legislation and instructions for implementation in detail and collect data on economic business activities under their respective managements systematically and in full while also publicising, disseminating, and providing guidance [on the content hereof] to the sectors for which they are responsible, businesspersons, entrepreneurs, and the public for [all concerned] to gain a correct understanding and implement [the content hereof] strictly, summarising and reporting to the Prime Minister's Office on a weekly basis.

2) The Taskforce specified in Decision 19/PB, dated 30 June 2023, ministries, ministry-equivalent organisations, local authorities, and parties concerned are to

recognise and offer their cooperation over the implementation of this Order for positive results to be achieved.

3) This Order enters into force on the date it is signed.

**Prime Minister**

*[SEAL OF THE PRIME MINISTER OF THE LAO PEOPLE'S DEMOCRATIC REPUBLIC AND SIGNATURE]*

**Sonexay Siphandone**

LAVI202308160069

A

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 13 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 29.08.2023

# ຄໍາສັ່ງ
## ວ່າດ້ວຍການເພີ່ມທະວີແກ້ໄຂບັນຫາເຄັ່ງຮ້ອນ ຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ

ເຖິງ: - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການຈັດຕັ້ງພັກ-ລັດ, ປະທານອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021.
- ອີງຕາມ ມະຕິຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ຮັບຜິດຊອບແກ້ໄຂບັນຫາເຄັ່ງຮ້ອນ ຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນເງິນຕາ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ສະບັບເລກທີ 19/ກມສພ, ລົງວັນທີ 30 ມິຖຸນາ 2023.
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 48/ຫສພ, ລົງວັນທີ 13 ກໍລະກົດ 2023.
- ອີງຕາມ ການຊີ້ນໍາ ຂອງກອງປະຊຸມຄະນະສະເພາະກິດ ຕາມມະຕິຕົກລົງ ສະບັບເລກທີ 19/ກມສພ, ຄັ້ງວັນທີ 21 ກໍລະກົດ 2023.

ເພື່ອຈັດຕັ້ງຜັນຂະຫຍາຍມະຕິຕົກລົງ ຂອງກົມການເມືອງສູນກາງພັກ ກ່ຽວກັບການເພີ່ມທະວີການແກ້ໄຂສະພາບຄວາມຫຍຸ້ງຍາກ, ຄວາມເຄັ່ງຮ້ອນ ທາງດ້ານເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ສະບັບເລກທີ 19/ກມສພ, ລົງວັນທີ 30 ມິຖຸນາ 2023, ທິດຊີ້ນໍາ ຂອງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ຕາມແຈ້ງການ ສະບັບເລກທີ 48/ຫສພ, ລົງວັນທີ 13 ກໍລະກົດ 2023 ແລະ ບັນດາມະຕິ ຂອງສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ແທດເໝາະກັບສະພາບການຕົວຈິງ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ທັງເພື່ອເປັນບ່ອນອີງພື້ນຖານໃຫ້ຂະແໜງການ, ອົງການກ່ຽວຂ້ອງຂັ້ນສູນກາງ ລວມທັງອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດ ມາດຕະການແກ້ໄຂ ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ຢ່າງຄ່ອງຕົວ ແລະ ໄດ້ຮັບຜົນເປັນຢ່າງດີ.

## ນາຍົກລັດຖະມົນຕີ ອອກຄໍາສັ່ງ:

I. ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ລວມທັງພາກສ່ວນເສດຖະກິດຕ່າງໆ ເພີ່ມທະວີຄວາມເປັນເຈົ້າການ ໃນການປະຕິບັດໜ້າທີ່ຂອງຕົນ ຕິດພັນກັບການແກ້ໄຂບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ໂດຍສຸມໃສ່ວຽກງານທີ່ກວມລວມ ແລະ ສໍາຄັນ ຈໍານວນໜຶ່ງ ດັ່ງນີ້:

1. ເພີ່ມທະວີການເຮັດວຽກງານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ, ທະຫານ, ຕໍາຫຼວດ, ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າ ຜ່ານຜ່າຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ດ້ວຍການ

ສືບຕໍ່ຈັດຕັ້ງເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ການສືບຕໍ່ປະຕິບັດ 2 ວາລະແຫ່ງຊາດ ໃຫ້ແຂງແຮງ ແລະ ມີໝາກຜົນຕົວຈິງຫຼາຍຂຶ້ນ ໂດຍສຸມໃສ່ປຸກລະ ດົມທົ່ວສັງຄົມ ເຂົ້າຮ່ວມໃນຂະບວນການແກ້ໄຂບັນຫາທີ່ເຄັ່ງຮ້ອນທາງດ້ານເສດຖະກິດ-ການເງິນ ຖືວຽກງານດັ່ງກ່າວ ເປັນສະໜາມຮົບອັນດັບໜຶ່ງ ທີ່ຈະຕ້ອງໄດ້ຮ່ວມແຮງຮ່ວມໃຈກັນຈັດຕັ້ງປະຕິບັດໃຫ້ເປັນຈິງ ແລະ ມີການຫັນປ່ຽນຈະ ແຈ້ງ. ພ້ອມດຽວກັນ ກໍຍູ້ແຮງການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ມີປະສິດທິຜົນ, ໃຫ້ປະຊາຊົນຕື່ນຕົວປະກອບສ່ວນ ເຂົ້າຮ່ວມແກ້ໄຂບັນຫາຫຍໍ້ທໍ້ຕ່າງໆ ຢູ່ຮາກຖານໃຫ້ໄດ້ດີ ເປັນຕົ້ນ: ໃຫ້ການຮ່ວມມື, ອໍານວຍຄວາມສະດວກ, ສະໜອງຂໍ້ມູນ ແລະ ຮ່ວມປຶກສາຫາລື ກັບຄະນະສະເພາະກິດ ຕາມມະຕິຕົກລົງ ສະບັບເລກທີ 19/ກມສພ ກ່ຽວກັບການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ໃຫ້ມີຜົນສໍາເລັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນແທ້ຈິງ;

2. ສະກັດກັ້ນ ແລະ ແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆ ທີ່ກ່ຽວຂ້ອງກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ, ໜີ້ສິນຕ່າງປະເທດ ແລະ ແກ້ໄຂຄວາມຫຍຸ້ງຍາກ, ຝືດເຄືອງ ໃນການດໍາລົງຊີວິດ, ການເຄື່ອນໄຫວດໍາເນີນການຜະລິດ, ທຸລະກິດ ແລະ ການບໍລິການຕ່າງໆ ເຊິ່ງສົ່ງຜົນກະທົບຕໍ່ສະຖຽນລະພາບທາງດ້ານການເມືອງ, ການພັດທະນາເສດຖະກິດ-ສັງຄົມ, ສິ່ງແວດລ້ອມ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບປອດໄພໃນສັງຄົມ.
3. ເອົາໃຈໃສ່ຢ່າງຕັ້ງໜ້າຈັດຕັ້ງປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟຸມເຟືອຍ ໂດຍການຫຼຸດລາຍຈ່າຍ ທີ່ບໍ່ຈໍາເປັນຂອງພາກລັດ ແລະ ຄົວເຮືອນ ເພື່ອບໍ່ໃຫ້ລະດັບເງິນເຟີ້ເພີ່ມຂຶ້ນ:
   1) ຈັດຕັ້ງປະຕິບັດດໍາລັດ ວ່າດ້ວຍການປະຕິບັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ລບ, ລົງວັນທີ 22 ກໍລະກົດ 2023 ຢ່າງເຂັ້ມງວດ ແລະ ເດັດຂາດ;
   2) ຈັດຕັ້ງປະຕິບັດດໍາລັດ ວ່າດ້ວຍລົດຂອງລັດ ສະບັບເລກທີ 599 /ລບ, ລົງວັນທີ 29 ກັນຍາ 2021 ຢ່າງເຂັ້ມງວດ ໃຫ້ມີຜົນຢ່າງແທ້ຈິງ ແລະ ສົ່ງເສີມການນໍາໃຊ້ລົດໄຟຟ້າ ຕາມມະຕິຂອງລັດຖະບານ ສະບັບເລກທີ 08/ລບ, ລົງວັນທີ 04 ຕຸລາ 2021 ເພື່ອຫຼຸດຜ່ອນການນໍາເຂົ້ານໍ້າມັນເຊື້ອໄຟ ກໍຄື ຫຼຸດຜ່ອນການໄຫຼອອກເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ພະລັງງານໄຟຟ້າ ທີ່ ສປປ ລາວມີທ່າແຮງ.

**II. ມອບໃຫ້ບັນດາທ່ານໃນຄະນະສະເພາະກິດ ຕາມມະຕິຕົກລົງ ສະບັບເລກທີ 19/ກມສພ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ສຸມໃສ່ຄົ້ນຄວ້າ ແລະ ນໍາໃຊ້ມາດຕະການ ດັ່ງນີ້:**

**1. ມາດຕະການແກ້ໄຂໄພເງິນເຟີ້.**

**1.1 ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:**

1) ຄຸ້ມຄອງປະລິມານເງິນ M2 ໃຫ້ຢູ່ໃນຂອບທີ່ສາມາດຄວບຄຸມໄດ້; ຄຸ້ມຄອງ, ຕິດຕາມ ແລະ ຈໍາກັດການເພີ່ມຂຶ້ນຂອງອັດຕາເງິນເຟີ້ ເຮັດໃຫ້ຫຼຸດລົງ. ພ້ອມທັງ ສຸມໃສ່ຄວບຄຸມລາຄາສິນຄ້າທີ່ສົ່ງຜົນກະທົບໄວຕໍ່ເງິນເຟີ້ຂອງ ສປປ ລາວ ແລະ ຊີວິດການເປັນຢູ່ຂອງປະຊາຊົນ;
2) ຄຸ້ມຄອງການເຄື່ອນໄຫວທາງດ້ານການເງິນ ຂອງບັນດາທະນາຄານທຸລະກິດ ຢ່າງໃກ້ຊິດ, ຮັບປະກັນບໍ່ໃຫ້ມີການປັ່ນປ່ວນ ແລະ ແລກປ່ຽນເງິນຕາທີ່ຜິດກົດໝາຍ; ພ້ອມນີ້, ໃຫ້ນໍາໃຊ້ມາດຕະການທີ່ເດັດຂາດຕໍ່ຜູ້ລະເມີດ ແລະ ກະທໍາຜິດຕໍ່ກົດໝາຍ, ຕໍ່ຜູ້ສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດທີ່ບໍ່ຊອບທໍາ ແລະ ຜິດກົດໝາຍ ໂດຍບໍ່ມີການຍົກເວັ້ນ;
3) ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ແກ້ໄຂການແລກປ່ຽນເງິນຕາ ທີ່ບໍ່ຖືກຕ້ອງ ແລະ ດໍາເນີນຄະດີ ຕໍ່ບຸກຄົນ, ນິຕິບຸກຄົນ ຜູ້ທີ່ຍັງເຄື່ອນໄຫວແລກປ່ຽນເງິນຕາແບບຊະຊາຍ ສ້າງຄວາມປັ່ນປ່ວນ; ພ້ອມທັງ ກຸ່ມເປົ້າໝາຍ ທີ່ມີການນໍາ

ໃຊ້ບັນຊີສ່ວນຕົວ ເຂົ້າໃນການແລກປ່ຽນເງິນຕາແບບຜິດກົດໝາຍ, ຖ້າພົບເຫັນພະນັກງານ ແລະ ເຈົ້າໜ້າທີ່ສວຍໃຊ້ໜ້າທີ່ອຳນວຍຄວາມສະດວກ ຕ້ອງໄດ້ດຳເນີນຕາມຂະບວນການຂອງກົດໝາຍ ຢ່າງເຂັ້ມງວດ.

1.2 ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້:

1) ສະກັດກັ້ນ ການລັກລອບນຳເຂົ້າລົດຜິດກົດໝາຍ ແລະ ສິນຄ້າຕາມຊາຍແດນ ຫຼື ສິນຄ້າທີ່ລັດຖະບານ ໄດ້ຮັບຮອງເປັນສິນຄ້າຟຸມເຟືອຍ, ສິນຄ້າທີ່ພາຍໃນສາມາດຜະລິດໄດ້, ທຸກການນຳເຂົ້າສິນຄ້າ ຕ້ອງຜ່ານດ່ານທີ່ມີເງື່ອນໄຂດ້ານພື້ນຖານໂຄງລ່າງຄົບຖ້ວນ (ລະບົບສະແກນເນີ, ລະບົບຕິດຕາມໃບ ບ 53, ລະບົບທັນສະໄໝ ເພື່ອຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ ເຊັ່ນ NSWA+); ກວດກາສິນຄ້າ ແລະ ເງິນຕາເຂົ້າ-ອອກ ຢູ່ດ່ານຊາຍແດນ ລວມທັງ ເຄື່ອງຕິດໂຕຜູ້ໂດຍສານ ຢ່າງເຂັ້ມງວດ; ແກ້ໄຂສະພາບການດ້ານອກລະບົບ, ໃຜກໍມີສິດນຳເຂົ້າ, ຮັບປະກັນຄວາມຖືກຕ້ອງຂອງມູນຄ່າແຈ້ງພາສີ (ບໍ່ຄວນໃຫ້ຜູ້ນຳເຂົ້າເປັນຜູ້ສ້າງໃບແຈ້ງລາຄາດ້ວຍຕົນເອງ, ຕ້ອງແມ່ນໂຮງງານ ຫຼື ຜູ້ຂາຍສິນຄ້າຢູ່ຕົ້ນທາງເປັນຜູ້ອອກໃຫ້) ແລະ ຫຼີກລ້ຽງການເສຍພາສີ; ຮີບຮ້ອນຄົ້ນຄວ້າມາດຕະການ ແລະ ວິທີການໃນການເກັບລາຍຮັບຈາກການຊື້-ຂາຍ ສິນຄ້າຜ່ານລະບົບອອນລາຍ. ໃນນັ້ນ ສຳລັບສິນຄ້າທີ່ສັ່ງມາຈາກຕ່າງປະເທດ ໃຫ້ມີການຄຸ້ມຄອງຜ່ານດ່ານ ຫຼື ລະບົບສາງ ຂອງບໍລິສັດຂົນສົ່ງ ເພື່ອຮັບປະກັນການເສຍພາສີ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ;

2) ສືບຕໍ່ຕິດຕາມ ການຮັບຮອງ ແລະ ປະກາດໃຊ້ ລັດຖະບັນຍັດ ວ່າດ້ວຍລາຍການສິນຄ້າ ແລະ ອັດຕາພາສີຂາອອກ, ລັດຖະບັນຍັດ ວ່າດ້ວຍຄ່າຊົບພະຍາກອນທຳມະຊາດ, ລັດຖະບັນຍັດ ວ່າດ້ວຍຄ່າເຊົ່າ ແລະ ສຳປະທານຊັບສິນຂອງລັດ;

3) ເລັ່ງເກັບລາຍຮັບ ຈາກຖານລາຍຮັບ ທີ່ມີໃນປັດຈຸບັນໃຫ້ຄົບຖ້ວນ ໂດຍນຳໃຊ້ເຄື່ອງມືທັນສະໄໝ ໃຫ້ເປັນລະບົບລວມສູນ ໂດຍສະເພາະເກັບລາຍຮັບ ຈາກພັນທະອາກອນ; ຄົ້ນຄວ້າການປັບປຸງອັດຕາອາກອນມູນຄ່າເພີ່ມຂຶ້ນ ຈາກ 7% ມາເປັນ 10%, ອາກອນຊົມໃຊ້, ອາກອນກາໄລ, ອາກອນລາຍໄດ້ ຈາກຜູ້ສະໜອງສິນຄ້າ ແລະ ການບໍລິການຢູ່ໃນບັນດາໂຄງການລົງທຶນຕ່າງປະເທດ (ຂະແໜງໄຟຟ້າ ແລະ ບໍ່ແຮ່). ພ້ອມນັ້ນ, ກໍໃຫ້ຄົ້ນຄ້ວາສ້າງສິ່ງຈູງໃຈໃຫ້ຫົວໜ່ວຍທຸລະກິດ ຫັນມາເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ໃຫ້ຫຼາຍຂຶ້ນ; ປັບປຸງກົນໄກການຄຸ້ມຄອງການນາເຂົ້າ-ສົ່ງອອກສິນຄ້າປະເພດຕ່າງໆ ດ້ວຍການບັງຄັບໃຊ້ກົດໝາຍທີ່ກ່ຽວຂ້ອງ ໃຫ້ມີຄວາມເຂັ້ມງວດ ໂດຍນຳໃຊ້ລະບົບກົນໄກອາ ກອນມູນຄ່າເພີ່ມ ເພື່ອຄວບຄຸມການເຄື່ອນໄຫວທຸລະກຳ ແລະ ທຸລະກິດ; ຄົ້ນຄວ້າການປັບເພີ່ມອັດຕາອາກອນຊົມ ໃຊ້ຕໍ່ການນຳເຂົ້າສິນຄ້າຟຸມເຟືອຍ ແລະ ສິນຄ້າທີ່ມີຜົນກະທົບທາງລົບຕໍ່ສຸຂະພາບ ແລະ ສັງຄົມ ໃຫ້ສາມາດປະຕິບັດໄດ້ໄວ, ພ້ອມທັງ ປະຕິບັດມາດຕະການປາບປາມການລັກລອບນຳເຂົ້າບໍ່ຖືກຕ້ອງທຸກຮູບແບບ.

1.3 ມອບໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ປະຕິບັດ ດັ່ງນີ້:

1) ໃຫ້ຄວບຄຸມ ແລະ ແຊກແຊງລາຄາສິນຄ້າ ທີ່ມີຜົນກະທົບໄວຕໍ່ເງິນເຟີ້ ແລະ ຊີວິດການເປັນຢູ່ຂອງປະຊາຊົນ;

2) ກຳນົດລາຍການສິນຄ້າຟຸມເຟືອຍ ເພື່ອຫຼຸດ ແລະ ຈຳກັດການນຳເຂົ້າ, ພ້ອມດຽວກັນ ກໍຄົ້ນຄວ້າ ແລະ ດຳເນີນມາດຕະການຄຸ້ມຄອງ ການນຳເຂົ້າສິນຄ້າ ທີ່ເໝາະສົມໃນການຈຳກັດ ແລະ ຫຼຸດຜ່ອນການນຳເຂົ້າສິນຄ້າທີ່ພາຍໃນສາມາດຜະລິດເອງໄດ້ ແລະ ສິນຄ້າຟຸມເຟືອຍ ໂດຍບໍ່ຂັດກັບລະບຽບການສາກົນ ທີ່ ສປປ ລາວ ເປັນພາຄີ ເປັນຕົ້ນແມ່ນບັນດາມາດຕະການທີ່ບໍ່ແມ່ນພາສີ ແລະ ບໍ່ກະທົບຕໍ່ອຸດສາຫະກຳການຜະລິດພາຍໃນ.

2. ມາດຕະການແກ້ໄຂອັດຕາແລກປ່ຽນ.

2.1. ມາດຕະການຄວບຄຸມອັດຕາແລກປ່ຽນ.

1) ມອບໃຫ້ທະນາຄານ ແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:

- ໃຫ້ຄຸ້ມຄອງ, ຕິດຕາມ ແລະ ຈຳກັດການເໜັງຕີງ ຂອງອັດຕາແລກປ່ຽນ ແລະ ຫັນການແລກປ່ຽນເງິນຕາ ໃຫ້ເຂົ້າສູ່ລະບົບ ໃນລະດັບຄວບຄຸມໄດ້;

- ຈັດຕັ້ງປະຕິບັດນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ ໃຫ້ສອດຄ່ອງກັບຕົວຈິງ, ກໍານົດອັດຕາແລກປ່ຽນອ້າງອີງປະຈໍາວັນ ໃຫ້ມີຄວາມຍືດຢຸ່ນຂຶ້ນ;
- ດຶງດູດເງິນຕາຕ່າງປະເທດ ຕໍ່ສິນຄ້າທີ່ຈໍາເປັນຮັບໃຊ້ການຜະລິດ ແລະ ການດໍາລົງຊີວິດ.

**2.2. ມາດຕະການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ ສປປ ລາວ**

**1) ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:**

ຈັດຕັ້ງປະຕິບັດຄໍາສັ່ງ ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023 ຢ່າງເຂັ້ມງວດ ແລະ ເດັດຂາດ.

**2) ມອບໃຫ້ກະຊວງ ປ້ອງກັນຄວາມສະຫງົບ ປະຕິບັດ ດັ່ງນີ້:**

- ໃຫ້ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ແກ້ໄຂການແລກປ່ຽນເງິນຕາ ທີ່ບໍ່ຖືກຕ້ອງ; ໃຫ້ເພີ່ມທະວີຄວາມຮັບຜິດຊອບໃນການເຄື່ອນໄຫວ, ກວດກາ ແລະ ດໍາເນີນຄະດີ ຕໍ່ບຸກຄົນ, ນິຕິບຸກຄົນ ຜູ້ທີ່ຍັງເຄື່ອນໄຫວແລກປ່ຽນເງິນຕາແບບຊະຊາຍ ສ້າງຄວາມປັ່ນປ່ວນ ຢ່າງເຂັ້ມງວດ ແລະ ເດັດຂາດ;
- ໃຫ້ຕິດຕາມກຸ່ມເປົ້າໝາຍ ທີ່ມີການນໍາໃຊ້ບັນຊີສ່ວນຕົວ ເຂົ້າໃນການແລກປ່ຽນເງິນຕາແບບຜິດກົດໝາຍ, ພ້ອມທັງຕິດຕາມ ຖ້າພົບເຫັນພະນັກງານ ແລະ ເຈົ້າໜ້າທີ່ ສວຍໃຊ້ໜ້າທີ່ອໍານວຍຄວາມສະດວກໃນການດໍາເນີນການແລກປ່ຽນເງິນແບບຜິດກົດໝາຍ ຕ້ອງໄດ້ດໍາເນີນຕາມຂະບວນການຂອງກົດໝາຍ ຢ່າງເຂັ້ມງວດ;
- ໃຫ້ຕິດຕາມການນໍາເງິນສົດເຂົ້າ-ອອກ ສປປ ລາວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການພ້ອມທັງປະຕິບັດມາດຕະການເດັດຂາດຕໍ່ຜູ້ລະເມີດ ຕາມພາລະບົດບາດຂອງຕົນ ແລະ ແລກປ່ຽນຂໍ້ມູນກັບທະນາຄານແຫ່ງ ສປປ ລາວ ຢ່າງເປັນປະຈໍາ.

**3) ມອບໃຫ້ກະຊວງ ອຸດສາຫະກໍາ ແລະ ການຄ້າ ປະຕິບັດ ດັ່ງນີ້:**

- ຕິດຕາມການນໍາເຂົ້າ ແລະ ສະໜອງນໍ້າມັນເຊື້ອໄຟ ຂອງບັນດາບໍລິສັດ ເພື່ອເປັນຂໍ້ມູນໃນການພິຈາລະນາດຶງດູດເງິນຕາຕ່າງປະເທດ ເພື່ອຮັບປະກັນການນໍາເຂົ້າ ແລະ ສະໜອງນໍ້າມັນເຊື້ອໄຟ ພາຍໃນໃຫ້ພຽງພໍ;
- ຄຸ້ມຄອງບັນດາບໍລິສັດນໍາເຂົ້າ-ສົ່ງອອກ ໂດຍການຂຶ້ນທະບຽນ ແລະ ທຸກລາຍການສິນຄ້າ ທີ່ມີການເຄື່ອນໄຫວປົກກະຕິ ໃຫ້ສໍາເລັດໂດຍໄວ, ໂດຍໃຫ້ບັນດາບໍລິສັດ ດັ່ງກ່າວ ເປີດບັນຊີເງິນຝາກຢູ່ທະນາຄານ ທີ່ມີສໍານັກງານຢູ່ ສປປ ລາວ, ຕ້ອງຮັບຊໍາລະການຊື້-ຂາຍ, ການບໍລິການ ການນໍາເຂົ້າ-ສົ່ງອອກ ແລະ ການປະຕິບັດພັນທະຕ່າງໆ ຜ່ານລະບົບທະນາ ຄານ; ພ້ອມດຽວກັນ ກໍຮີບຮ້ອນສ້າງກົນໄກເຊື່ອມຈອດຂໍ້ມູນ ແລະ ພັດທະນາລະບົບຂໍ້ມູນຂ່າວສານໃຫ້ເຊື່ອມຈອດກັບຂະແໜງການກ່ຽວຂ້ອງ;

**2.3. ມາດຕະການຄຸ້ມຄອງເງິນຕາຕ່າງປະເທດຈາກການລົງທຶນ.**

**1) ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ປະຕິບັດ ດັ່ງນີ້:**

- ໃຫ້ຂົນຂວາຍດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ (FDI) ເຂົ້າມາໃຫ້ຫຼາຍ;
- ອໍານວຍຄວາມສະດວກ ແລະ ດໍາເນີນຂັ້ນຕອນການຂໍອະນຸມັດໂຄງການໃຫ້ໄວ ແລະ ທົບທວນໂຄງສ້າງເງິນລົງທຶນທັງໝົດ;
- ປັບປຸງກົນໄກການຕິດຕາມເພື່ອຄຸ້ມຄອງການນໍາເຂົ້າທຶນ (FDI), ການກູ້ຢືມຕ່າງປະເທດ ແລະ ທຶນຊ່ວຍເຫຼືອທາງການເພື່ອພັດທະນາ (ODA) ໃຫ້ນໍາເຂົ້າສູ່ລະບົບທະນາຄານ; ສ້າງກົນໄກເຊື່ອມຈອດຂໍ້ມູນ, ຕິດຕາມການຢັ້ງຢືນທຶນກັບຜູ້ລົງທຶນດ້ວຍລະບົບເອເລັກໂຕຣນິກ.

**2) ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້:**

- ຊຸກຍູ້ສົ່ງເສີມການນໍາໃຊ້ສະກຸນເງິນທ້ອງຖິ່ນ ໂດຍສະເພາະການຮັບຊໍາລະສິນຄ້າ ແລະ ຄ່າບໍລິການ ເປັນເງິນກີບ ພາຍໃນປະເທດ; ກວດກາທຸລະກໍາເງິນຕາຕ່າງປະເທດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ; ຄຸ້ມຄອງລາຍຮັບງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ ແລະ ເຄື່ອນໄຫວຜ່ານກະຊວງການເງິນ ໃຫ້ຝາກໄວ້ລວມສູນນໍາທະນາຄານແຫ່ງ ສປປ ລາວ;

- ຕິດຕາມ-ກວດກາ ການນໍາເຂົ້າທຶນຈົດທະບຽນ, ທຶນອື່ນໆ ແລະ ລາຍຮັບ ຂອງໂຄງການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ເປັນເງິນຕາຕ່າງປະເທດ ໃຫ້ສອດຄ່ອງກັບສັນຍາ ແລະ ກົດໝາຍການຄຸ້ມຄອງເງິນຕາຕ່າງປະເທດ;
- ໃຫ້ບັນດາໜ່ວຍງານທີ່ຄຸ້ມຄອງອອກອະນຸຍາດການນໍາເຂົ້າ ແລະ ສົ່ງອອກສິນຄ້າ ກໍານົດເງື່ອນໄຂໃຫ້ວິສາຫະກິດຕ້ອງສະແດງເອກະສານການຊໍາລະສະສາງການນໍາເຂົ້າ-ສົ່ງອອກ ສິນຄ້າຜ່ານທະນາຄານ ຢູ່ ສປປ ລາວ ເປັນເງື່ອນໄຂໜຶ່ງ ກ່ອນການອອກໃບອະນຸຍາດ.

2.4. ມາດຕະການຂົນຂວາຍແຫຼ່ງທຶນເງິນຕາຕ່າງປະເທດ

1) ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ປະຕິບັດ ດັ່ງນີ້:

- ເລັ່ງກວດກາ ແລະ ປະເມີນຄືນບັນດາໂຄງການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ, ໂດຍສະເພາະ ໂຄງການລົງທຶນແຮ່ທາດແບບທົດລອງ ແລະ ໂຄງການແຮ່ທາດແບບປົກກະຕິ, ຖ້າໂຄງການໃດບໍ່ມີຄວາມຄືບໜ້າ ກໍໃຫ້ແຈ້ງເຕືອນຕາມຂັ້ນຕອນ ເພື່ອກ້າວໄປສູ່ການຍົກເລີກ ຫຼື ແຈ້ງສິ້ນສຸດບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ແລະ ຖອນໂຄງການຄືນ, ພ້ອມທັງ ເລັ່ງທວງການປະຕິບັດພັນທະທີ່ບໍລິສັດຍັງຄ້າງຊໍາລະ, ລວມທັງ ກວດກາການນໍາເຂົ້າທຶນຕົວຈິງ, ການປະຕິບັດພັນທະຕ່າງໆ ຕາມສັນຍາ ຫຼືກລັ່ງການຈັບຈອງໂຄງການ ເປັນຕົ້ນ ແມ່ນບັນດາບໍລິສັດ ທີ່ໄດ້ຮັບຫຼາຍສັນຍາໂຄງການສໍາປະທານ;
- ຮີບຮ້ອນສືບຕໍ່ປັບປຸງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ສອດຄ່ອງກັບເງື່ອນໄຂຂອງການພັດທະນາເສດຖະກິດ-ສັງຄົມ ຂອງປະເທດໃນໄລຍະໃໝ່; ເລັ່ງຄົ້ນຄວ້າ ແລະ ປັບປຸງນິຕິກໍາລຸ່ມກົດໝາຍ ທີ່ມີຄວາມຈໍາເປັນເປັນຕົ້ນ ແມ່ນດໍາລັດ ວ່າດ້ວຍການຄຸ້ມຄອງຄາຊີໂນ ໃຫ້ສໍາເລັດໂດຍໄວ; ເລັ່ງປັບປຸງກົນໄກ ແລະ ຂັ້ນຂອດໃນການປະສານງານອະນຸມັດການລົງທຶນ ລວມທັງການເພີ່ມສິດ ແລະ ຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນ; ສືບຕໍ່ຈັດຕັ້ງປະຕິບັດຄໍາສັ່ງເລກທີ 02/ນຍ ແລະ ເລກທີ 03/ນຍ, ປັບປຸງຂໍ້ຕົກລົງ ວ່າດ້ວຍການແບ່ງຄວາມຮັບຜິດຊອບໃຫ້ຂັ້ນທ້ອງຖິ່ນ ໃນການພິຈາລະນາອະນຸຍາດການສຶກສາສໍາຫຼວດເນື້ອທີ່ດິນ ເພື່ອລົງທຶນສໍາປະທານດ້ານການຜະລິດກະສິກໍາ-ປ່າໄມ້ ແລະ ການບໍລິການ ສະບັບເລກທີ 003/ຄລທ, ລົງວັນທີ 6 ມິຖຸນາ 2022; ປັບປຸງບັນຊີກິດຈະການສໍາປະທານ ແລະ ກິດຈະການຄວບຄຸມ, ກະກຽມ ແລະ ເປີດທົດລອງນໍາໃຊ້ໂປຼແກມຕິດຕາມເອກະສານຂໍລົງທຶນ. ພ້ອມດຽວກັນ ກໍເອົາໃຈໃສ່ຄົ້ນຄວ້ານະໂຍບາຍສົ່ງເສີມໃນການດໍາເນີນທຸລະກິດ ແລະ ການລົງທຶນ ສໍາລັບໂຄງການລົງທຶນຂະໜາດໃຫຍ່ ແລະ ໂຄງການຍຸດທະສາດ, ກໍານົດມາດຕະການໃນການຊຸກຍູ້ການນໍາເຂົ້າທຶນເພື່ອມາພັດທະນາໂຄງການຢູ່ໃນເຂດເສດຖະກິດພິເສດ, ນິຄົມອຸດສາຫະກໍາ ແລະ ໂຄງການອື່ນ ທີ່ບໍ່ແມ່ນເຂດເສດຖະກິດພິເສດ ເພື່ອຊຸກຍູ້ໃຫ້ສາມາດຈັດຕັ້ງປະຕິບັດຕາມແຜນການທີ່ວາງໄວ້;
- ຮີບຮ້ອນເຈລະຈາເພີ່ມອັດຕາພັນທະມອບເໝົາກິດຈະການຕ່າງໆ, ການຂາຍຮຸ້ນກິດຈະການ 100% ແລະ ເງິນປັນຜົນຂອງກິດຈະການກາຊີໂນຂອງເຂດສາມຫຼ່ຽມຄໍາ, ການຖືຮຸ້ນຂອງລັດ 30% ຢູ່ຈຸດ B ເຂດເສດຖະກິດພິເສດສະຫວັນ-ເຊໂນ ແລະ ເຂດຈໍາປາສັກ, ການຖືຮຸ້ນຂອງລັດ 25% ຢູ່ເຂດພັດທະນາ ກວມລວມໄຊເຊດຖາ ແລະ 30% ຢູ່ເຂດປາກເຊ-ຍີ່ປຸ່ນ ແລະ ຮີບຮ້ອນແກ້ໄຂບັນຫາພາຫະນະນໍາເຂົ້າທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຢູ່ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາໃຫ້ສໍາເລັດໂດຍໄວ.

2) ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ ປະຕິບັດ ດັ່ງນີ້:

ເລັ່ງປະຕິບັດມາດຕະການໃນການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ ເພື່ອສ້າງຄວາມສະດວກໃຫ້ແກ່ການນໍາເຂົ້າ ແລະ ສົ່ງອອກສິນຄ້າ ໃຫ້ມີຄວາມວ່ອງໄວ ແລະ ຫຼຸດຜ່ອນການສິ້ນເປືອງໃຫ້ແກ່ພາກທຸລະກິດ; ປັບປຸງຂອດການບໍລິການຂົນສົ່ງລະຫວ່າງທາງບົກ, ທ່າບົກ ແລະ ທາງລົດໄຟ ໃຫ້ລວມສູນ, ມີຄວາມສະດວກ, ວ່ອງໄວ ແລະ ຄ່າບໍລິການສົມເຫດສົມຜົນ; ຕິດຕາມ ແລະ ຊຸກຍູ້ການປັບປຸງບັນຫາທີ່ຄ້າງຄາຕາມການແນະນໍາຂອງອົງການການບິນພົນລະເຮືອນສາກົນ (ICAO) ຕິດພັນກັບການປັບປຸງການບໍລິການ ແລະ ຄຸ້ມຄອງການບິນຜ່ານ.

3) ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້:

ເລັ່ງຊຸກຍູ້ ການເກັບລາຍຮັບ ໂດຍສະເພາະບັນດາດ່ານພາສີຊາຍແດນ, ຊຸກຍູ້ສົ່ງເສີມການຄ້າຊາຍແດນໃຫ້ຫຼາຍຂຶ້ນ ແລະ ໃຫ້ປັບປຸງການຄຸ້ມຄອງດ່ານໃຫ້ມີຄວາມເປັນເອກະພາບ ແລະ ຕາມທິດທັນເປັນທັນສະໄໝ, ໂປ່ງໃສ, ມີຄວາມສະດວກ, ວ່ອງໄວ ແລະ ຫຼຸດຜ່ອນຂັ້ນຂອດທີ່ບໍ່ຈຳເປັນ. ພ້ອມນັ້ນ ກໍເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງ ແລະ ຄຸນນະພາບການບໍລິການຮອງຮັບການທ່ອງທ່ຽວ, ຫຼຸດຜ່ອນຂັ້ນຂອດທີ່ຍັງເປັນອຸປະສັກໃນການສົ່ງເສີມທ່າແຮງການຄ້າຊາຍແດນຕາມຂອບສັນຍາ ໂດຍກຳນົດມາດຕະການຄຸ້ມຄອງທີ່ແທດເໝາະກັບຈຸດພິເສດຂອງແຕ່ລະທ້ອງຖິ່ນ.

4) ມອບໃຫ້ກະຊວງການຕ່າງປະເທດ ປະຕິບັດ ດັ່ງນີ້:

ຮີບຮ້ອນຄົ້ນຄວ້ານະໂຍບາຍວີຊາ (VISA) ສຳລັບນັກທ່ອງທ່ຽວທີ່ຕ້ອງການເຂົ້າ-ອອກຫຼາຍເທື່ອຕໍ່ປີ ແລະ ການໃຫ້ວີຊາ (VISA) ຝ່າຍດຽວ ໃຫ້ປະເທດທີ່ຕ້ອງການດຶງເອົານັກທ່ອງທ່ຽວ; ນະໂຍບາຍກ່ຽວກັບສິ່ງປຸກສ້າງ ໂດຍກຳນົດເປັນເຂດ ແລະ ເກັບຄ່າທຳນຽມທີ່ດິນກະສິກຳ; ພັດທະນາກົນໄກ ຕິດຕາມ ເພື່ອຄຸ້ມຄອງລາຍຮັບເງິນຕາຕ່າງປະ ເທດຈາກການທ່ອງທ່ຽວ ແລະ ລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງເງິນກັບຄືນປະເທດ ຂອງແຮງງານລາວ ທີ່ໄປອອກແຮງງານຢູ່ຕ່າງປະເທດ.

5) ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້ ປະຕິບັດ ດັ່ງນີ້:

ເລັ່ງເຈລະຈາ ດ້ານສຸຂະນາໄມ ພືດ ແລະ ສັດ ເພື່ອເປີດຕະຫຼາດສິນຄ້າ ທີ່ປະເທດພວກເຮົາມີທ່າແຮງ ເປັນຕົ້ນ: ກາເຟ, ຢາງພາລາ, ໝາກມ່ວງ, ໝາກມີ້, ອ້ອຍ, ຖົ່ວດິນ, ຊີ້ນງົວແຊ່ແຂງ, ປາຊວາຍ; ພ້ອມທັງເຜີຍແຜ່ບັນດາຂໍ້ກຳນົດເງື່ອນໄຂ ດ້ານສຸຂະນາໄມພືດ-ສັດ ໃຫ້ຜູ້ຜະລິດ, ຜູ້ປະກອບການ ຊາບຢ່າງທົ່ວເຖິງ ເພື່ອສາມາດສົ່ງອອກສິນຄ້າກະສິກຳໃຫ້ຫຼາຍຂຶ້ນ.

2.5. ມາດຕະການປະຢັດເງິນຕາຕ່າງປະເທດ.

1) ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້:

- ການຈັດຊື້-ຈັດຈ້າງ ພາຫະນະ, ເຄື່ອງປະກອບ, ເຄື່ອງໃຊ້ຫ້ອງການ, ວັດຖຸອຸປະກອນ ແລະ ເຄື່ອງແບບຂອງສຳນັກງານອົງການຈັດຕັ້ງລັດ ແມ່ນໃຫ້ປະຕິບັດອັນທີ່ມີຄວາມຈຳເປັນ ບົນພື້ນຖານປະຢັດ ແລະ ໃຫ້ບຸລິມະສິດແກ່ຜະລິດຕະພັນທີ່ຜະລິດຢູ່ພາຍໃນປະເທດ;
- ການເຄື່ອນໄຫວວຽກງານທາງລັດຖະການ ຢູ່ຕ່າງປະເທດ ທີ່ນຳໃຊ້ງົບປະມານຂອງລັດ ຕ້ອງໃຫ້ມີການຄົ້ນຄວ້າລະອຽດ ໂດຍເລືອກເຟັ້ນຫົວຂໍ້ກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ທີ່ກ່ຽວຂ້ອງ ແລະ ຈຳເປັນເທົ່ານັ້ນ, ທັງໃຫ້ຈຳກັດຈຳນວນເປົ້າໝາຍທີ່ຈະເຂົ້າຮ່ວມ;
- ການຕ້ອນຮັບແຂກພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ງົບປະມານຂອງລັດ ຕ້ອງຍຶນຈິດໃຈປະຢັດມັດທະຍັດ, ຫ້າມຈັດຊື້ເຄື່ອງດື່ມທີ່ມີລາຄາແພງທີ່ນຳເຂົ້າຈາກຕ່າງປະເທດ ໂດຍໃຫ້ຫັນມານຳໃຊ້ເຄື່ອງດື່ມ ທີ່ເປັນຜະລິດຕະພັນພາຍໃນຂອງລາວ ແລະ ບໍ່ອະນຸຍາດ ໃຫ້ຊື້ຂອງຂວັນທີ່ເປັນຜະລິດຕະພັນຈາກຕ່າງປະເທດ ໃຫ້ແຂກພາຍໃນ ແລະ ຕ່າງປະເທດ.

3. ມາດຕະການຄຸ້ມຄອງລາຄາສິນຄ້າ.

3.1. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດ ດັ່ງນີ້:

1) ເລັ່ງຄົ້ນຄວ້າ-ກຳນົດໂຄງສ້າງລາຄາສິນຄ້າ ທີ່ຈຳເປັນຕໍ່ການດຳລົງຊີວິດ ໃຫ້ປະກອບມີປັດໄຈອັດຕາແລກປ່ຽນ ເພື່ອໃຫ້ເຫັນຕົ້ນທຶນການຜະລິດ ແລະ ການນຳເຂົ້າ ໂດຍລົງເລິກເກັບກຳຂໍ້ມູນ, ວິເຄາະວິໄຈ ຕົ້ນທຶນການຜະລິດ, ໂຄງສ້າງລາຄາຂອງ ເຂົ້າ, ຊີ້ນໝູ, ປານິນ, ໄຂ່ ແລະ ອື່ນໆ; ພ້ອມດຽວກັນ ໃຫ້ເລັ່ງດຸ່ນດ່ຽງຄວາມສາມາດໃນການຜະລິດ ແລະ ການສະໜອງສິນຄ້າ ຂອງແຕ່ລະທ້ອງຖິ່ນ ທີ່ສາມາດຜະລິດກຸ້ມຕົນເອງໄດ້ ແລະ ຂາຍອອກເປັນສິນຄ້າ;

2) ຮີບຮ້ອນຄົ້ນຄວ້າ ແລະ ດຳເນີນມາດຕະການຄຸ້ມຄອງການນຳເຂົ້າສິນຄ້າ ໂດຍສ້າງບັນຊີລາຍການສິນຄ້າ ທີ່ພາຍໃນສາມາດຜະລິດໄດ້ ລວມທັງ ສິນຄ້າທີ່ບໍ່ຈຳເປັນ ເພື່ອຫຼຸດລົງການນຳເຂົ້າ ໂດຍບໍ່ຂັດກັບລະບຽບສາກົນ ທີ່ ສປປ ລາວ ເປັນພາຄີ ເຊັ່ນ: ມາດຕະການທີ່ບໍ່ແມ່ນພາສີ ແລະ ບໍ່ກະທົບຕໍ່ອຸດສາຫະກຳການຜະລິດພາຍໃນ;

3) ເລັ່ງການຜະລິດເປັນສິນຄ້າ ໂດຍຫຼຸດຜ່ອນການສົ່ງອອກວັດຖຸດິບ, ຂະຫຍາຍຖານການປຸງແຕ່ງແຮ່ທາດ ແລະ ສິນຄ້າກະສິກຳ ເພື່ອສ້າງມູນຄ່າເພີ່ມກ່ອນການສົ່ງອອກ;

4) ເລັ່ງໃສ່ການຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາໂຮງງານປຸງແຕ່ງກະສິກຳ ເພື່ອຜະລິດປັດໃຈການຜະລິດສະໜອງຕະຫຼາດພາຍໃນ ເຊັ່ນ: ໂຮງງານອາຫານສັດ ໃຫ້ສາມາດສະໜອງອາຫານສັດໄດ້ 70%, ໂຮງງານຝຸ່ນບົ່ມ ສາມາດສະໜອງໃຫ້ໄດ້ 50% ຂອງຄວາມຕ້ອງການພາຍໃນ ແລະ ດຳເນີນມາດຕະການຄຸ້ມຄອງການນຳເຂົ້າ ຄວບຄູ່ກັບການສົ່ງເສີມການຜະລິດພາຍໃນ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ໃຫ້ບັນດາສູນ ແລະ ຟາມ; ຜະລິດແນວພັນເຂົ້າ, ໝູ, ໄກ່ (ແນວພັນໄກ່ໄຂ່ ແລະ ໄກ່ຊີ້ນ), ປາ ແລະ ພືດບຸລິມະສິດຈຳນວນໜຶ່ງ ໃຫ້ສາມາດແຂ່ງຂັນກັບສິນຄ້ານຳເຂົ້າໄດ້ ແລະ ໃຫ້ສາມາດສະໜອງແນວພັນຮັບໃຊ້ພາຍໃນໂດຍພື້ນຖານ ໃຫ້ໄດ້ (60-70%).

**3.2. ມອບໃຫ້ທະນາຄານ ແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:**

ຄົ້ນຄວ້າ ແລະ ທົບທວນຫຼັກການໃນການສະໜອງສິນເຊື່ອ ເພື່ອຊຸກຍູ້ ແລະ ສົ່ງເສີມການຜະລິດເພື່ອຊົມໃຊ້ພາຍໃນ, ທົດແທນການນຳເຂົ້າ ແລະ ການຜະລິດເພື່ອສົ່ງອອກ; ເລັ່ງຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບເລກທີ 93/ນຍ, ລົງວັນທີ 14 ກໍລະກົດ 2023 ວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ໃຫ້ຖືກຈຸດ ແລະ ມີປະສິດທິຜົນກວ່າເກົ່າ, ໃນນີ້ ໃຫ້ຮີບຮ້ອນກຳນົດບັນຊີຫົວໜ່ວຍທຸລະກິດ ທີ່ຜະລິດສິນຄ້າ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກ ທີ່ມີໜໍ່ແໜງການຜະລິດທີ່ດີ, ມີຕະຫຼາດຮອງຮັບແລ້ວ ແລະ ບັນດາຫົວໜ່ວຍທຸລະກິດ ທີ່ຈະເຮັດໜ້າທີ່ ແຊກແຊງລາຄາ ຕາມບັນຊີ ທີ່ເອກະພາບກັນແລ້ວ.

**4. ມາດຕະການແກ້ໄຂໜີ້ສິນຕ່າງປະເທດ.**

**4.1. ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:**

1) ລະດົມທຶນ ໂດຍຜ່ານເຄື່ອງມືຜະລິດຕະພັນທາງການເງິນ ດ້ວຍຫຼາຍຮູບການຕາມເງື່ອນໄຂ ແລະ ຄວາມເໝາະສົມຂອງສະພາບເສດຖະກິດ ຂອງ ສປປ ລາວ. ພາກສ່ວນຮັບຜິດຊອບການຄຸ້ມຄອງໜີ້ສິນຕໍ່ຕ່າງປະເທດ ຕ້ອງຮັບປະກັນການຄຸ້ມຄອງ-ບໍລິຫານໜີ້ສິນຕໍ່ຕ່າງປະເທດ ໃຫ້ຄ່ອງຕົວໃນແຕ່ລະໄລຍະ;

2) ເລັ່ງທວງໜີ້ສິນບ້ວງປ່ອຍກູ້ຕໍ່ ໃຫ້ບັນດາລັດວິສາຫະກິດ ແລະ ການຊຳລະໜີ້ສິນຕ່າງປະເທດໃຫ້ທັນຕາມກຳນົດເວລາ;

3) ແລກປ່ຽນຂໍ້ມູນ ແລະ ປະສານສົມທົບ ກ່ຽວກັບແຫຼ່ງທຶນທີ່ຈະລະດົມໄດ້ (ເບື້ອງເຂົ້າ) ແລະ ແຜນຊຳລະຕົວຈິງແຕ່ລະເດືອນ, ງວດ, ປີ ເພື່ອໃຫ້ຮູ້ກະແສເງິນເຂົ້າ-ອອກ ແລະ ສາມາດບໍລິຫານແຫຼ່ງເງິນຕາພຽງພໍທັນເວລາ.

**4.2. ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້:**

1) ລະດົມແຫຼ່ງທຶນຈາກບັນດາຊັບສິນທີ່ເປັນໂຄງການພະລັງງານໄຟຟ້າ, ໂຄງການບໍ່ແຮ່ ແລະ ອື່ນໆ;

2) ຮີບຮ້ອນດຳເນີນຂັ້ນຕອນ ເພື່ອສາມາດລະດົມທຶນ ແລະ ໃຫ້ສຳເລັດການໂອນເງິນຈາກໂຄງການ EDL-T;

3) ຊຸກຍູ້ຫົວໜ່ວຍທຸລະກິດທີ່ມີການສົ່ງອອກສິນຄ້າ ຫຼື ການບໍລິການ ທີ່ມີລາຍຮັບເປັນເງິນຕາຕ່າງປະເທດ ມອບພັນທະເປັນເງິນຕາຕ່າງປະເທດ ເພື່ອຊຳລະໜີ້ສິນຕ່າງປະເທດ.

**4.3. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ປະຕິບັດ ດັ່ງນີ້:**

ຈັດຕັ້ງການປະມູນສິດສຳປະທານໂຄງການບໍ່ແຮ່ ໃນເຂດທີ່ມີຫຼາຍບໍລິສັດສົນໃຈ ໂດຍມີເງື່ອນໄຂຫຼັກແມ່ນ ການມອບເງິນໃຫ້ລັດຖະບານລ້າ ແລະ ການນຳເອົາເງິນມາໃຫ້ລັດຖະບານ ກູ້ຢືມໃນໄລຍະຍາວ ແລະ ດອກເບ້ຍຕ່ຳ ຕາມເງື່ອນໄຂທີ່ໄດ້ກຳນົດໄລຍະຜ່ານມາ, ຢຸດເຊົາກົນໄກການສະເໜີ ແລະ ອະນຸມັດ ໂດຍບໍ່ມີການກວດກາ, ຄັດເລືອກຜູ້

ລົງທຶນ ໃຫ້ເປັນບໍລິສັດມືອາຊີບ, ມີວິຊາການ, ທຶນຮອນຕົວຈິງ, ປະສົບປະການ ບໍ່ແມ່ນບໍລິສັດນາຍໜ້າ ແລະ ບໍ່ຈັບຈອງຫຼາຍໂຄງການ ແຕ່ບໍ່ພັດທະນາ, ບໍ່ຕິດຄ້າງໜີ້ສິນນຳທະນາຄານ ຫຼື ຕິດຄ້າງພັນທະຕໍ່ລັດຖະບານ.

III. ມາດຕະການຈັດຕັ້ງປະຕິບັດ.

1) ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູງກາງ, ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ອອກນິຕິກຳແນະນຳການຈັດຕັ້ງປະຕິບັດໃຫ້ລະອຽດ ແລະ ເກັບກຳຂໍ້ມູນການ ເຄື່ອນໄຫວກິດຈະການທາງເສດຖະກິດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນໃຫ້ເປັນລະບົບຄົບຊຸດ. ພ້ອມທັງ,ໂຄສະນາເຜີຍແຜ່ເຊື່ອມຊຶມ ແລະ ຊີ້ນຳໃຫ້ຂະແໜງການ ໃນຄວາມຮັບຜິດຊອບຂອງຕົນ, ນັກທຸລະກິດ, ຜູ້ປະກອບການ ແລະ ໃນສັງຄົມໃຫ້ມີຄວາມຮັບຮູ້ເຂົ້າໃຈຢ່າງຖືກຕ້ອງ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ສະຫຼຸບລາຍງານໃຫ້ຫ້ອງວ່າການສຳນັກງານນາຍົກ ລັດຖະມົນຕີ ເປັນແຕ່ລະອາທິດ.
2) ຄະນະສະເພາະກິດ ຕາມຂໍ້ຕົກລົງ ສະບັບເລກທີ 19/ກມສພ, ລົງວັນທີ 30 ມິຖຸນາ 2023, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ.
3) ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ